# ພິທີມອບ-ຮັບ ໜ້າທີ່ ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່

### ທີ່ ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2022

ໃນຕອນບ່າຍ ວັນທີ 02 ສິງຫາ 2022 ທີ່ ໂຮງແຮມ ແລນມາກ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີປະກາດການຈັດຕັ້ງ ມອບ-ຮັບ ໜ້າທີ່ ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ລະຫວ່າງ ຜູ້ເກົ່າ ແລະ ຜູ້ໃໝ່, ໃຫ້ກຽດເຂົ້າຮ່ວມໂດຍ **ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະກົມທີ່ກ່ຽວຂ້ອງຂອງ ທຫລ**, **ທ່ານ ຄຳສຸກ ສູນດາລາ ຮັກສາການປະທານສະພາບໍລິຫານ ທຄຕລ** ພ້ອມດ້ວຍຄະນະສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ, ຄະນະສູນ, ຄະນະສາຂາທົ່ວລະບົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວນີ້ **ທ່ານ ປະສິມເພັດ ຄຳຕັນ ຮອງກົມປະຕິຮູບລັດວິສາຫະກິດ ແລະ ປະກັນໄພ ກະຊວງການເງິນ, ສະມາຊິກສະພາບໍລິຫານ** ໄດ້ຂຶ້ນຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຜູ້ອຳນວຍການ ທຄຕລ (ຜູ້ໃໝ່) **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ແລະ ການຍົກຍ້າຍໄປຮັບໜ້າທີ່ໃໝ່ຂອງ ຜູ້ອຳນວຍການ ທຄຕລ (ຜູ້ເກົ່າ) **ທ່ານ ຄຳພຸດ ສິດທິລາດ** ໂດຍໃນພິທີຄັ້ງນີ້ ທັງສອງທ່ານກໍ່ໄດ້ກ່າວ ມອບ-ຮັບ ໜ້າທີ່ຢ່າງເປັນທາງການ.




ພ້ອມນັ້ນໃນພິທີດັ່ງກ່າວ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍ່ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ທີ່ ທຄຕລ ສາມາດຍາດມາໄດ້ໃນໄລຍະຜ່ານມາ, ພ້ອມກັນນັ້ນ ທ່ານຍັງໄດ້ໃຫ້ທິດຊີ້ນຳໃຫ້ ທຄຕລ ເອົາໃຈໃສ່ ເປັນຕົ້ນແມ່ນການໃຫ້ບໍລິການລູກຄ້າໃຫ້ໄດ້ມາດຕະຖານ, ສືບຕໍ່ພັດທະນາລະບົບໄອທີໃຫ້ທັນສະໄໝ ຮັບປະກັນການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນເທື່ອລະກ້າວ, ສຸມໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ແລະ ແຜນທຸລະກິດຂອງ ທຄຕລ ແນ່ໃສ່ຮັບປະກັນຜົນປະໂຫຍດລວມຂອງຜູ້ຖືຮຸ້ນ ແລະ ຮັກສາມູນເຊື້ອອັນດີງາມຂອງ ທຄຕລ.








ທ່ານ. ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ (ຜູ້ເກົ່າ)

ທ່ານ. ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ (ຜູ້ໃໝ່)